**ຂໍ້ກຳນົດ ແລະ ເງື່ອນໄຂຂອງການນຳໃຊ້ອຸປະກອນ SecureSign ສຳລັບບໍລິການ PBe**

## 1. ຂໍ້ກຳນົດທົ່ວໄປ

1.1 ຂໍ້ກຳນົດ ແລະ ເງື່ອນໄຂໃນທີ່ນີ້ ແລະ ສ່ວນເພີ່ມອື່ນໆທີ່ກ່ຽວຂ້ອງ, ການແກ້ໄຂ ແລະ ການປ່ຽນແປງທັງໝົດແມ່ນສ້າງຂຶ້ນເພື່ອເປັນຂໍ້ຕົກລົງລະຫວ່າງລູກຄ້າ ແລະ ທະນາຄານ, ກ່ຽວກັບການສະໝັກນຳໃຊ້ກັບອຸປະກອນ SecureSign ຂອງລູກຄ້າ.

1.2 ຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້ແມ່ນປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂ ແລະ ກົດລະບຽບກົດໝາຍທີ່ກ່ຽວຂ້ອງກັບການນຳໃຊ້ກັບບັນດາບັນຊີເງິນຝາກປະຢັດ ແລະ ບັນຊີກະແສລາຍວັນທີ່ລູກຄ້າສະເໜີວ່າ ລູກຄ້າໄດ້ອ່ານແລ້ວ, ເຂົ້າໃຈແລ້ວ ແລະ ຕົກລົງເຫັນດີປະຕິບັດຕາມໂດຍບໍ່ມີເງື່ອນໄຂ ຫຼື ຂໍ້ຂັດແຍ່ງໃດໆ.

1.3 ໃນກໍລະນີເກີດມີຂໍ້ຂັດແຍ່ງ ຫຼື ບໍ່ລົງຮອຍກັນລະຫວ່າງຂໍ້ກຳນົດ ແລະ ເງື່ອນໄຂໃນທີ່ນີ້ແລະຂໍ້ກຳນົດ ແລະ ເງື່ອນໄຂກົດລະບຽບ ແລະ ກົດໝາຍຄຸ້ມຄອງບັນຊີອາດເກີດມາຈາກການແປໃນພາຍຫລັງຂອງການນຳໃຊ້ອຸປະກອນ SecureSign.

1.4 ຄຳນາມຈຳນວນໜ້ອຍທີ່ໃຊ້ແມ່ນຈະລວມເຖິງຄຳນາມຈຳນວນຫຼາຍ ແລະ ອາດຈະມີຄວາມໝາຍໃນທາງກົງກັນຂ້າມ.

1.5 ຄຳທີ່ນຳໃຊ້ໃນການກ່າວເຖິງເພດຊາຍແມ່ນອາດຈະລວມເຖິງເພດຍິງ ແລະ ອາດຈະມີຄວາມໝາຍໃນທາງກົງກັນຂ້າມ.

## 2. ນິຍາມ

ໃນຂໍ້ກຳນົດ ແລະ ເງື່ອນໄຂນີ້, ເວັ້ນເສຍແຕ່ວ່າສະພາບການຈະກຳນົດເປັນຢ່າງອື່ນ, ຄຳສັບ/ປະໂຫຍກ ທີ່ໃຊ້ມີຄວາມໝາຍດັ່ງລຸ່ມນີ້:

2.1 **"ທະນາຄານ"** ໝາຍເຖິງ ທະນາຄານພາບລິກ ລາວ ຈຳກັດ ແລະ ບັນດາສາຂາທີ່ຢູ່ໃນ ສປປລາວ. ເຊິ່ງເປັນທະນາຄານໃນກຸ່ມຂອງ ທະນາຄານພາບລິກ ເບີຮາດ (6463-H) ປະເທດມາເລເຊຍ, ເປັນທະນາຄານທີ່ຈົດທະບຽນໃນ ສປປລາວ ແລະ ມີສຳນັກງານຕັ້ງຢູ່ເຮືອນເລກທີ 100/1-4, ຖະໜົນຊຸນບູລົມ, ໄປສະນີ 6614, ບ້ານຫັດສະດີໃຕ້, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສປປລາວ.

2.2 "**ອຸປະກອນ SecureSign**" ໝາຍເຖິງອຸປະກອນດີຈິຕອລ ເຊິ່ງທີ່ຮູ້ກັນດີວ່າ VASSCO Digipass DP270XH ຜະລິດໂດຍ VASSCO Data Security Interational GmbH ແລະ ລະບົບດັ່ງກ່າວແມ່ນຈະໃຫ້ມີການເຊັນຢັ້ງຢືນຜ່ານລະບົບດີຈິຕອລ ແລະ ອະນຸມັດທຸລະກຳໂດຍລູກຄ້າ.

2.3 "**ບໍລິການ PBe**" ໝາຍເຖິງ ການບໍລິການທາງການທະນາຄານຜ່ານທາງອິນເຕີເນັດ ລວມມີທັງລູກຄ້າບຸກຄົນ ແລະ ລູກຄ້ານິຕິບຸກຄົນ.

2.4 "**ລະຫັດ PIN**" ໝາຍເຖິງ ເລກລະຫັດລັບຢັ້ງຢືນສະເພາະສ່ວນຕົວທີ່ມີ 6 ຕົວເລກເພື່ອໃຊ້ຜ່ານເຂົ້າສູ່ອຸປະກອນ SecureSign.

## 3. ອຸປະກອນ SecureSign

3.1 ອຸປະກອນ SecureSign ແມ່ນເປັນອຸປະກອນສະເພາະຂອງລູກຄ້າ ແລະ ຖືກນຳໃຊ້ພ້ອມກັບບັນຊີລະຫັດປະຈຳຕົວຜູ້ໃຊ້ ແລະ ເລກລະຫັດຜ່ານເພື່ອທີ່ຈະດຳເນີນທຸລະກຳທາງອິນເຕີເນັດຂອງລູກຄ້າ. ອຸປະກອນ SecureSign ແມ່ນບໍ່ອະນຸຍາດໃຫ້ນຳໃຊ້ຮ່ວມກັບບຸກຄົນອື່ນ.

3.2 ອຸປະກອນ SecureSign ແມ່ນຖືກສ້າງໃຫ້ສະເພາະລູກຄ້າທີ່ທະນາຄານເຫັນສົມຄວນ ຫຼັງຈາກທີ່ລູກຄ້າເຫັນດີ ແລະ ພໍໃຈກັບເງື່ອນໄຂຕ່າງໆທີ່ທະນາຄານກຳນົດຂື້ນ ແລະ ພ້ອມກັບຄ່າໃຊ້ຈ່າຍສຳລັບອຸປະກອນ SecureSign ແລະ ສຳລັບຄ່າໃຊ້ຈ່າຍດັ່ງກ່າວຈະໄດ້ຫັກຈາກບັນຊີລູກຄ້າ.

3.3 ຄ່າໃຊ້ຈ່າຍປະກອບມີດັ່ງນີ້:

<u>ນິຕິບຸກຄົນ/ບຸກຄົນ:</u>

(i) ຄ່າທຳນຽມຂອງອຸປະກອນ SecureSign ແມ່ນ 15 ໂດລາ ຫຼືທຽບເທົ່າ ຕໍ່ໜຶ່ງເຄື່ອງ (ຈ່າຍພຽງຄັ້ງດຽວ).

(ii) ຄ່າບຳລຸງຮັກສາລາຍເດືອນແມ່ນບໍ່ໄດ້ເສຍ.

3.4 ຄ່າທຳນຽມການປ່ຽນເຄື່ອງໃໝ່ແມ່ນ 15 ໂດລາ ຫຼື ທຽບເທົ່າ ຕໍ່ໜຶ່ງເຄື່ອງສຳລັບລູກຄ້າເຮັດອຸປະກອນເສຍ ຫຼື ເສຍຫາຍທີ່ເກີດຈາກການບໍ່ເອົາໃຈໃສ່ຂອງລູກຄ້າເອງ.

3.5 ທະນາຄານຈະອະນຸຍາດໃຫ້ນຳໃຊ້ອຸປະກອນ SecureSign ສະເພາະຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ເທົ່ານັ້ນ.

3.6 ອີງຕາມການອອກອຸປະກອນ SecureSign ໃຫ້ນັ້ນ, ທຸລະກຳການທະນາຄານຜ່ານທາງອິນເຕີເນັດທັງໝົດທີ່ເກີດຂື້ນກັບບັນຊີຂອງລູກຄ້າ ໂດຍເກີດຈາກການດຳເນີນ ຫຼື ເຮັດທຸລະກຳໂດຍລູກຄ້າ ແລະລູກຄ້າຕ້ອງເສຍຄ່າປັບໃໝໃຫ້ກັບທະນາຄານໃນກໍລະນີມີການສູນເສຍ, ການຮຽກຮ້ອງສິດ, ຄວາມຕ້ອງການ, ໜີ້ສິນ ຫຼື ການຮ້ອງຟ້ອງ, ການກະທຳ ແລະ ຄວາມເສຍຫາຍຕ່າງໆທີ່ເກີດຈາກລູກຄ້າໃນການດຳເນີນທຸລະກຳດັ່ງກ່າວ.

3.7 ລູກຄ້າຕ້ອງຮັກສາອຸປະກອນ SecureSign ໃຫ້ມີຄວາມປອດໄພສະເໝີ ແລະ ຄວນແຈ້ງທະນາຄານໃນທັນທີ ທີ່ເບີ 021 262188 ຫຼື ສາຂາທະນາຄານທີ່ທ່ານຖືບັນຊີ, ຖ້າວ່າອຸປະກອນ SecureSign ຂອງທ່ານສູນຫາຍ, ຖືກລັກ ຫຼື ບໍ່ນຳໃຊ້ແລ້ວ. ເມື່ອໄດ້ຮັບການແຈ້ງທີ່ເປັນລາຍລັກອັກສອນ, ທະນາຄານຈະເປີດການນຳໃຊ້ອຸປະກອນ SecureSign ດັ່ງກ່າວ ແລະ ປ່ຽນເຄື່ອງໃໝ່ໃຫ້ພາຍຫຼັງຊຳລະຄ່າໃຊ້ຈ່າຍທີ່ຕິດພັນ.

3.8 ອຸປະກອນ SecureSign ເປັນອຸປະກອນດ້ານຄວາມປອດໄພທີ່ຢັ້ງຢືນຄວາມເປັນຈິງ ແລະ ຖືກຕ້ອງຂອງທຸລະກຳດ້ານການທະນາຄານທີ່ດຳເນີນທຸລະກຳອອນລາຍ ແລະ ອະນຸມັດທຸລະກຳດັ່ງກ່າວ. ລະຫັດຜ່ານ ຫຼື PIN ແມ່ນມີຄວາມຈຳເປັນຢ່າງຍິ່ງໃນການເຂົ້າສູ່ລະບົບຂອງອຸປະກອນ SecureSign.

3.9 ລູກຄ້າຕ້ອງປະຕິບັດຕາມຄຳແນະນຳລຸ່ມນີ້ຢ່າງເຂັ້ມງວດເມື່ອນຳໃຊ້ອຸປະກອນ SecureSign:

(i) ບໍ່ຄວນເປີດເຜີຍລະຫັດຜ່ານຂອງອຸປະກອນ SecureSign ໃຫ້ຄົນອື່ນຮູ້ຈັກ. ບໍ່ຄວນຂຽນໃສ່ບ່ອນໃດໆ, ລະຫັດທີ່ຖືກຕ້ອງຈະສາມາດເຂົ້າອຸປະກອນ SecureSign ໄດ້.

(ii) ເມື່ອຕັ້ງລະຫັດຜ່ານບໍ່ຄວນຕັ້ງລະຫັດທີ່ງ່າຍຈົນເກີນໄປເຊັ່ນ: 111111, 222222, 123456, ອື່ນໆ...

(iii) ໃນກໍລະນີລະຫັດຜ່ານຖືກເປີດເຜີຍແມ່ນໃຫ້ປ່ຽນລະຫັດໃໝ່ທັນທີ.

(iv) ໃຫ້ຮັກສາອຸປະກອນ SecureSign ຢູ່ໃນຄວາມປອດໄພສະເໝີ. ຖ້າວ່າອຸປະກອນ SecureSign ສູນຫາຍ, ກະລຸນາແຈ້ງສູນບໍລິການລູກຄ້າທັນທີ ທີ່ເບີ 021 262188 ຫຼື ສາຂາທະນາຄານທີ່ທ່ານຖືບັນຊີ.

(v) ການເຂົ້າສູ່ລະບົບບໍລິການ PBe ຕ້ອງນຳໃຊ້ລະຫັດປະຈຳຕົວຜູ້ໃຊ້ ແລະ ລະຫັດຜ່ານ ແລະ ລະຫັດຂອງອຸປະກອນ SecureSign. ທະນາຄານຈະບໍ່ຮັບຜິດຊອບແຕ່ຢ່າງໃດສຳລັບການນຳໃຊ້ອຸປະກອນ SecureSign ທີ່ທະນາຄານບໍ່ໄດ້ແນະນຳ.

(vi) ອຸປະກອນ SecureSign ແມ່ນອຸປະກອນອີເລັກໂທຣນິກຊະນິດໜຶ່ງທີ່ປະກອບມີຮູບຮ່າງ, ໜ້າຈໍ LCD ແລະ ອຸປະກອນໄຟຟ້າດ້ານໃນທີ່ອາດສາມາດແຕກຫັກໄດ້ ຖ້າວ່າບໍ່ປະຕິບັດຕາມຄຳແນະນຳ. ອຸປະກອນ SecureSign ບໍ່ຄວນໃຫ້ຖືກນ້ຳ, ບໍ່ຄວນເກັບຮັກສາໄວ້ບ່ອນທີ່ມີອຸນຫະພູມສູງ ຫຼື ປັບປ່ຽນດັດແປງຮູບຮ່າງ.

(vii) ອຸປະກອນ SecureSign ຈະບໍ່ມີອາໄຫຼ່ ແລະ ແບັດເຕີລີປ່ຽນ.

## 4. ຂໍ້ຈຳກັດດ້ານການຮັບປະກັນ ແລະ ການຊື້ສິນຄ້າ

4.1 ລູກຄ້າຕ້ອງເຂົ້າໃຈ ແລະ ເຫັນດີວ່າການນຳໃຊ້ການບໍລິການແລະອຸປະກອນ SecureSign ອາດມີຄວາມສ່ຽງທີ່ລູກຄ້າຕ້ອງຮັບຜິດຊອບເອງ. ການໃຫ້ບໍລິການໄດ້ເປັນໄປຕາມມາດຕະຖານ, ທະນາຄານຈະບໍ່ຮັບຜິດຊອບທັງໝົດຂອງແຕ່ລະປະເພດຜະລິດຕະພັນບໍ່ວ່າ ໂດຍຊັດເຈນ ຫຼື ບໍ່ຊັດເຈນກໍ່ຕາມທີ່ມີແຕ່ບໍ່ໄດ້ຈຳກັດສະເພາະການຮັບປະກັດສິນຄ້າເທົ່ານັ້ນ ເຊິ່ງຈະເບິ່ງຈາກຄວາມເໝາະສົມຂອງເປົ້າໝາຍການນຳໃຊ້ອຸປະກອນ SecureSign ແລະ ຈະບໍ່ມີການລະເມີດສິດຂອງບຸກຄົນທີ່ສາມ.

4.2 ທະນາຄານຈະບໍ່ຮັບປະກັນວ່າ:

(i) ການບໍລິການຈະຕອບສະໜອງກັບຄວາມຕ້ອງການຂອງລູກຄ້າ.

(ii) ການບໍລິການຈະບໍ່ມີສິ່ງຂັດຂ້ອງລົບກວນ, ທັນເວລາ, ປອດໄພ ຫຼື ຂໍ້ຜິດພາດ.

(iii) ຜົນທີ່ໄດ້ຮັບຈາກການນຳໃຊ້ບໍລິການຈະຖືກຕ້ອງສະເໝີ.

(iv) ຄຸນນະພາບຂອງຜະລິດຕະພັນ, ການບໍລິການ, ຂໍ້ມູນ ຫຼື ອື່ນໆທີ່ຊື້ມາ ຫຼື ລູກຄ້າໄດ້ຮັບຜ່ານການບໍລິການຈະຕອບສະໜອງຄວາມຄາດຫວັງຂອງລູກຄ້າສະເໝີ ແລະ ຂໍ້ຜິດພາດທາງດ້ານເທັກໂນໂລຍີຈະຖືກຕ້ອງສະເໝີ.

(v) ຄຳແນະນຳ ຫຼື ຂໍ້ມູນບໍ່ວ່າຈາກການບອກເລົ່າ ຫຼື ເປັນລາຍລັກອັກສອນທີ່ລູກຄ້າໄດ້ຮັບຈາກທະນາຄານ ຫຼື ຈາກການບໍລິການ ເຊິ່ງຈະບໍ່ມີການສ້າງການຮັບປະກັນໃດໆທີ່ບໍ່ໄດ້ລະບຸຊັດເຈນໃນຂໍ້ກຳນົດເຫຼົ່ານີ້.

## 5. ການປັບໃໝ

5.1 ລູກຄ້າເຫັນດີໃຫ້ທະນາຄານມີການປັບໃໝ ແລະ ຫັກເຕັມຈຳນວນທີ່ກ່ຽວຂ້ອງກັບໜີ້ສິນທັງໝົດ, ຄວາມເສຍຫາຍ, ສູນເສຍ, ປັບໃໝ, ການປະຕິບັດ, ການຕັດສິນ, ຕົ້ນທຶນ, ຄ່າໃຊ້ຈ່າຍ ຫຼື ການຊຳລະອື່ນໆທີ່ໄດ້ກຳນົດໄວ້ແລ້ວທີ່ເກີດຂຶ້ນ ຫຼື ຢືນຢັນໂດຍທະນາຄານ ໂດຍປະຕິບັດຕາມຄຳປະຕິຍານ, ການສະເໜີ, ການສື່ສານ, ການກະທຳ ແລະ/ຫຼື ການລະເລີຍດ້ວຍວິທີໃດກໍ່ຕາມທີ່ກ່ຽວຂ້ອງ ຫຼື ການບໍ່ເອົາໃຈໃສ່ ຫຼື ການບໍ່ເຕັມໃຈປະຕິບັດ ຫຼື ລະເມີດ ຫຼື ເມີນເສີຍ, ຊັກຊ້າ, ຜິດສັນຍາ ຫຼື ຜິດພາດຕໍ່ກັບພັນທະຂອງລູກຄ້າທີ່ມີໃນຂໍ້ກຳນົດ ແລະ ເງື່ອນໄຂໃນເອກະສານສະບັບນີ້ ຫຼື ຢ່າງອື່ນທີ່ເກີດຈາກລູກຄ້າ ແລະ/ຫຼື ພະນັກງານວິຊາການ ຫຼື ລູກຈ້າງຂອງລູກຄ້າ ໃນການປະຕິບັດພັນທະຂອງເຂົາເຈົ້າພາຍໃຕ້ຂໍ້ກຳນົດ ແລະ ເງື່ອນໄຂ.

5.2 ທະນາຄານຈະບໍ່ຮັບຜິດຊອບຕໍ່ຄຳສັ່ງທີ່ມີລັກສະນະສໍ້ໂກງ ຫຼື ບໍ່ໄດ້ຮັບອະນຸຍາດ, ຫຼື ການຕົກເຮ່ຍ (ລວມທັງຜົນເສຍຫາຍຈາກການຕົກເຮ່ຍ), ການເສຍຫາຍ ຫຼື ສິ່ງໃດໆທີ່ເຮັດໃຫ້ເກີດຄວາມເສຍຫາຍໂດຍເກີດຈາກໂຕລູກຄ້າ ຍົກເວັ້ນແຕ່ຈະເກີດຂຶ້ນໂດຍຄວາມປະໝາດ ຫຼື ເຈດຕະນາຂອງທາງທະນາຄານ.

5.3 ຂໍ້ຜູກມັດຂອງລູກຄ້າໃນເອກະສານສະບັບນີ້ຈະມີຜົນຕໍ່ການຢຸດຕິການໃຫ້ບໍລິການ PBe ແກ່ລູກຄ້າໂດຍຄູ່ສັນຍາຝ່າຍໃດຝ່າຍໜຶ່ງ.

ຂ້າພະເຈົ້າ/ພວກຂ້າພະເຈົ້າຍອມຮັບ ແລະ ເຫັນດີທີ່ຈະປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂນີ້.

[ສ່ວນທີ່ເຫຼືອຂອງໜ້ານີ້ແມ່ນເປົ່າຫວ່າງ]